ກະຊວງໂຍທາທິການ ແລະ ຂົນສົ່ງ
ຂາເຂົ້າ ເລກທີ 9673
ວັນທີ 20-5-2016

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

=====0000=====

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ຫ້ອງການ

ເລກທີ 2626 /ກຊສ.ຫກ

ນະຄອນຫຼວງວຽງຈັນ, ວັນທີ 20 ເດືອນ ພຶດສະພາ 2016

**ສະໂນດນຳສົ່ງ**

ເຖິງ: - ທ່ານ ຫົວໜ້າ ຫ້ອງການ ກະຊວງສຶກສາທິການ ແລະ ກິລາ

- ທ່າທ່ານ ຫົວໜ້າ ຫ້ອງການ ຫົວໜ້າ ກະຊວງການຕ່າງປະເທດ
- ທ່ານ ຫົວໜ້າ ຫ້ອງການກະຊວງແຜນການ ແລະ ການລົງທຶນ
- ທ່ານ ຫົວໜ້າ ຫ້ອງການ ກະຊວງສະທາລະນະສຸກ
- ທ່ານ ຫົວໜ້າ ຫ້ອງການກະຊວງກະສິກຳ ແລະ ປ່າໄມ້
- ທ່ານ ຫົວໜ້າ ຫ້ອງການ ກະຊວງການເງິນ
- ທ່ານ ຫົວໜ້າ ຫ້ອງການ ກະຊວງພາຍໃນ
- **ທ່ານ ຫົວໜ້າ ຫ້ອງການ ກະຊວງໂຍທາທິການ ແລະ ຂົນສົ່ງ**
- ທ່ານ ຫົວໜ້າ ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ
- ທ່ານ ຫົວໜ້າ ຫ້ອງການ ກະຊວງຍຸຕິທຳ
- ທ່ານ ຫົວໜ້າ ຫ້ອງການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
- ທ່ານ ຫົວໜ້າ ຫ້ອງການກະຊວງພະລັງງານ ແລະ ບໍ່ແຮ່
- ທ່ານ ຫົວໜ້າ ຫ້ອງການ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
- ທ່ານ ຫົວໜ້າ ຫ້ອງການ ກະຊວງປ້ອງກັນປະເທດ
- ທ່ານ ຫົວໜ້າ ຫ້ອງການ ກະຊວງປ້ອງກັນຄວາມສະຫງົບ
- ທ່ານ ຫົວໜ້າ ຫ້ອງການ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ
- ທ່ານ ຫົວໜ້າ ຫ້ອງການ ອົງການກວດສອບແຫ່ງລັດ
- ທ່ານ ຫົວໜ້າ ຫ້ອງການ ສູນກາງແນວລາວສ້າງຊາດ
- ທ່ານ ຫົວໜ້າ ຫ້ອງການ ສູນກາງສະຫະພັນແມ່ຍິງລາວ
- ທ່ານ ຫົວໜ້າ ຫ້ອງການ ສູນກາງສະຫະພັນກຳມະບານລາວ
- ທ່ານ ຫົວໜ້າ ຫ້ອງການ ສູນກາງສະຫະພັນຊາວໜຸ່ມລາວ
- ທ່ານ ຫົວໜ້າ ຫ້ອງການ ກອງທຶນປົກປັກຮັກສາສິ່ງແວດລ້ອມ

- ຜູ້ອຳນວຍການ ລັດວິສາຫະກິດໄຟຟ້າລາວ
- ຄະນະບໍດີ ມະຫາວິທະຍາໄລແຫ່ງຊາດ

ເລື່ອງ: ນຳສົ່ງ ດຳລັດ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ ສະບັບປັບປຸງ

ເອກະສານສົ່ງມາພ້ອມນີ້:

| ລ/ດ | ເນື້ອໃນເອກະສານ | ຈຳນວນ | ໝາຍເຫດ |
|---|---|---|---|
| 1 | • ດຳລັດ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ ສະບັບປັບປຸງ ເລກທີ 84/ລບ, ລົງວັນທີ 5 ເມສາ 2016. | 1 ຊຸດ | ເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດຕາມພາລະບົດບາດ |

ດັ່ງນັ້ນ, ຫ້ອງການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບຕາມທາງຄວນດ້ວຍ.

ຫົວໜ້າ ຫ້ອງການ

ຫ້ອງການ

ເກສອນ ໄຊຍະເສນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 84/ລບ

ນະຄອນຫຼວງວຽງຈັນ, ວັນທີ 5 ເມສາ 2016

# ດຳລັດ
# ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ

- ອີງຕາມ ກົດໝາຍ ວ່າດ້ວຍ ລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ໜັງສືສະເໜີ ຂອງລັດຖະມົນຕີວ່າການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 6649/ກຊສ, ລົງວັນທີ 21 ຕຸລາ 2015.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມກວດກາ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ເພື່ອໃຫ້ໂຄງການພັດທະນາ ນຳໄປຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ມີປະສິດທິຜົນ ແນໃສ່ຮັບປະກັນໃຫ້ຜູ້ໄດ້ຮັບຜົນກະທົບ ໄດ້ຮັບການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ, ການຊ່ວຍສ້າງອາຊີບທີ່ໝັ້ນຄົງ, ການປັບປຸງຊີວິດການເປັນຢູ່ ໃຫ້ດີຂຶ້ນກວ່າເກົ່າ ຫຼື ເທົ່າເດີມ ພ້ອມທັງເຮັດໃຫ້ໂຄງການດັ່ງກ່າວ ໄດ້ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໃຫ້ມີຄວາມຍືນຍົງ.

**ມາດຕາ 2 ການທົດແທນຄ່າເສຍຫາຍ**

ການທົດແທນຄ່າເສຍຫາຍ ແມ່ນການທົດແທນ ເປັນທີ່ດິນ, ວັດຖຸ ຫຼື ເປັນເງິນ ສໍາລັບ ທີ່ດິນ, ສິ່ງປຸກສ້າງ, ພືນລະປູກ, ສັດລ້ຽງ ແລະ ລາຍຮັບ ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ ດ້ວຍມູນຄ່າປ່ຽນແທນ.

**ມາດຕາ 3 ການຈັດສັນຍົກຍ້າຍປະຊາຊົນ**

ການຈັດສັນຍົກຍ້າຍປະຊາຊົນ ແມ່ນການຍົກຍ້າຍ ແລະ ຫຍັບຍ້າຍ ລວມທັງ ການຟື້ນຟູຊີວິດການເປັນຢູ່ຂອງຜູ້ໄດ້ຮັບຜົນກະທົບ ຈາກໂຄງການພັດທະນາ ອອກຈາກເຂດທີ່ຢູ່ອາໄສເດີມໄປເຂດທີ່ຢູ່ອາໄສໃໝ່ ຕາມການຈັດສັນຂອງໂຄງການພັດທະນາ ທີ່ໄດ້ຮັບການເຫັນດີ ໂດຍສຽງສ່ວນຫຼາຍຂອງຜູ້ໄດ້ຮັບຜົນກະທົບ.

**ມາດຕາ 4 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນດໍາລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ເຈົ້າຂອງໂຄງການ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ໄດ້ຮັບອະນຸຍາດໃຫ້ສຶກສາ, ສໍາຫຼວດ, ອອກແບບ, ກໍ່ສ້າງ ແລະ ດໍາເນີນໂຄງການພັດທະນາ;

2. ໂຄງການພັດທະນາ ໝາຍເຖິງ ໂຄງການລົງທຶນ ຫຼື ກິດຈະການຕ່າງໆ ທີ່ດໍາເນີນການພາຍໃນຂອບເຂດ ສປປ ລາວ ຊຶ່ງຕ້ອງໄດ້ທົດແທນຄ່າເສຍຫາຍ ແລະ ຈັດສັນຍົກຍ້າຍປະຊາຊົນ;

3. ຜູ້ໄດ້ຮັບຜົນກະທົບ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ ແບບຖາວອນ ຫຼື ແບບຊົ່ວຄາວ ຊຶ່ງໄດ້ຮັບການຂຶ້ນທະບຽນໄວ້ໃນວັນຂຶ້ນທະບຽນສິດຂອງຜູ້ໄດ້ຮັບຜົນກະທົບ;

4. ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ໝາຍເຖິງ ການຊ່ວຍເຫຼືອຂອງເຈົ້າຂອງໂຄງການໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ທີ່ຖືກຍົກຍ້າຍດ້ວຍການປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນກວ່າເກົ່າ ຫຼື ເທົ່າເດີມ;

5. ກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ ໝາຍເຖິງ ກຸ່ມຄົນໃດໜຶ່ງ ໃນກຸ່ມຂອງ ຜູ້ໄດ້ຮັບຜົນກະທົບ ເຊັ່ນ ຜູ້ພິການ, ຜູ້ເສຍອົງຄະ, ຜູ້ສູງອາຍຸ, ເດັກນ້ອຍ ແລະ ແມ່ໝ້າຍ, ແມ່ຮ້າງທີ່ມີພາລະຮັບຜິດຊອບຄອບຄົວ ຊຶ່ງມີຄວາມສ່ຽງທີ່ຈະທຸກຍາກລົງຫຼາຍກວ່າກຸ່ມຄົນອື່ນ ຈາກໂຄງການພັດທະນາ;

6. ມູນຄ່າປ່ຽນແທນ ໝາຍເຖິງ ມູນຄ່າທີ່ຄິດໄລ່ເປັນ ວັດຖຸ, ເງິນ ຫຼື ທີ່ດິນ ທີ່ຈໍາເປັນຕ້ອງນໍາໃຊ້ເພື່ອປ່ຽນແທນທີ່ດິນ, ສິ່ງປຸກສ້າງ, ພືນລະປູກ, ສັດລ້ຽງ ແລະ ລາຍຮັບ ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ;

7. ການຫຍັບຍ້າຍ ໝາຍເຖິງ ການຍົກຍ້າຍປະຊາຊົນ ອອກຈາກເຂດທີ່ຢູ່ອາໄສເດີມໄປເຂດໃກ້ຄຽງທີ່ພົ້ນຈາກພື້ນທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ;

8. ບ້ານເຈົ້າພາບ ໝາຍເຖິງ ບ້ານໃດໜຶ່ງ ທີ່ມີປະຊາຊົນອາໄສຢູ່ກ່ອນແລ້ວ ແລະ ໄດ້ມີຜູ້ໄດ້ຮັບຜົນກະທົບອື່ນ ຍົກຍ້າຍໄປອາໄສຢູ່ນໍາບ້ານດັ່ງກ່າວ.

**ມາດຕາ 5 ຫຼັກການພື້ນຖານ ກ່ຽວກັບ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ**

ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ໄດ້ຮັບຜົນກະທົບ;
2. ມີຄວາມສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ ແລະ ຍຸຕິທຳ;
3. ມີການປະສານສົມທົບ, ປຶກສາຫາລືແລະ ເຂົ້າຮ່ວມ ລະຫວ່າງ ເຈົ້າຂອງໂຄງການ, ຜູ້ໄດ້ຮັບຜົນກະທົບ, ການຈັດຕັ້ງພາກລັດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບໂຄງການພັດທະນາ ຂອງພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ, ຜູ້ໄດ້ຮັບຜົນກະທົບ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງກັບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ.

## ໝວດທີ 2
## ການທົດແທນຄ່າເສຍຫາຍ

**ມາດຕາ 7 ການສ້າງແຜນການທົດແທນຄ່າເສຍຫາຍ**

ກ່ອນ ຈັດຕັ້ງປະຕິບັດໂຄງການ ກໍຄື ເຊັນສັນຍາສຳປະທານໂຄງການ, ເຈົ້າຂອງໂຄງການຕ້ອງປະສານສົມທົບກັບອົງການຈັດຕັ້ງທີ່ກ່ຽວຂ້ອງໃນແຕ່ລະຂັ້ນ ເກັບກຳຂໍ້ມູນ ກ່ຽວກັບ ຜູ້ໄດ້ຮັບຜົນກະທົບ ລວມທັງ ລາຍການທົດແທນຄ່າເສຍຫາຍຢ່າງລະອຽດ ເພື່ອສ້າງເປັນແຜນການທົດແທນຄ່າເສຍຫາຍ ປະກອບເຂົ້າໃນ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການທີ່ຈະຈັດຕັ້ງປະຕິບັດ.

ວັນທີ່ອອກຂໍ້ຕົກລົງຮັບຮອງເອົາ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ນັ້ນ ຖືເປັນວັນຂຶ້ນທະບຽນສິດຂອງຜູ້ໄດ້ຮັບຜົນກະທົບ.

**ມາດຕາ 8 ການປະຕິບັດແຜນການທົດແທນຄ່າເສຍຫາຍ**

ເຈົ້າຂອງໂຄງການ ຕ້ອງທົດແທນຄ່າເສຍຫາຍໃຫ້ຖືກຕ້ອງ ແລະ ສອດຄ່ອງກັບຫຼັກການສຳຄັນຕາມແຕ່ລະກໍລະນີ ດັ່ງນີ້:

1. ໃນກໍລະນີ ຜູ້ໄດ້ຮັບຜົນກະທົບມີເອກະສານ ກ່ຽວກັບ ສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ສູນເສຍທີ່ດິນທັງໝົດ ຫຼື ສ່ວນໃຫຍ່, ສ່ວນທີ່ດິນທີ່ຍັງເຫຼືອ ບໍ່ສາມາດນຳໃຊ້ໄດ້ອີກ, ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍທັງໝົດ ໂດຍຈັດສັນທີ່ດິນບ່ອນໃໝ່ທົດແທນ ຕາມມູນຄ່າປ່ຽນແທນທີ່ຄິດໄລ່ໄວ້ ແລະ ໃຫ້ໄດ້ຮັບເອກະສານ ກ່ຽວກັບ ສິດນຳໃຊ້ທີ່ດິນຕອນນັ້ນ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ເພື່ອໃຫ້ໄດ້ຮັບເອກະສານດັ່ງກ່າວ. ໃນກໍລະນີ ບໍ່ສາມາດຈັດສັນທີ່ດິນທີ່ເໝາະສົມທົດແທນໃຫ້ ຫຼື ດິນນັ້ນ ມີມູນຄ່າປ່ຽນແທນໜ້ອຍກວ່າມູນຄ່າທີ່ດິນ ທີ່

ຜູ້ໄດ້ຮັບຜົນກະທົບສູນເສຍ, ເຈົ້າຂອງໂຄງການ ຕ້ອງໄດ້ທົດແທນຄ່າເສຍຫາຍ ດ້ວຍ ຮູບການອື່ນ ຕາມມູນຄ່າປ່ຽນແທນ;

2. ໃນກໍລະນີ ຜູ້ໄດ້ຮັບຜົນກະທົບມີເອກະສານ ກ່ຽວກັບ ສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ສູນເສຍທີ່ດິນ ພຽງສ່ວນໜຶ່ງ ແລະ ທີ່ດິນທີ່ຍັງເຫຼືອ ສາມາດນຳໃຊ້ໄດ້ຢູ່, ເຈົ້າຂອງໂຄງການ ຕ້ອງໄດ້ທົດແທນຄ່າເສຍຫາຍໃນສ່ວນທີ່ໄດ້ສູນເສຍນັ້ນ ດ້ວຍມູນຄ່າປ່ຽນແທນທີ່ຄິດໄລ່ໄວ້, ສ່ວນທີ່ດິນທີ່ຍັງເຫຼືອ ຕ້ອງໃຫ້ຜູ້ໄດ້ຮັບຜົນກະທົບໄດ້ຮັບເອກະສານ ກ່ຽວກັບ ສິດນຳໃຊ້ທີ່ດິນຕອນນັ້ນ ໂດຍເຈົ້າຂອງໂຄງການ ເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ;

3. ໃນກໍລະນີ ຜູ້ໄດ້ຮັບຜົນກະທົບມີສິດນຳໃຊ້ທີ່ດິນຕາມປະເພນີ ສູນເສຍສິດ ກ່ຽວກັບການຄອບຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ ດ້ວຍຄວາມສະຫງົບ, ຕໍ່ເນື່ອງ ແລະ ຍາວນານ, ບໍ່ໄດ້ບຸກລຸກທີ່ດິນເຂດສະຫງວນ ຫຼື ເຂດຫວງຫ້າມຂອງລັດ ໂດຍໄດ້ຮັບການຢັ້ງຢືນຈາກອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ, ເຈົ້າຂອງໂຄງການ ຕ້ອງທົດແທນຄ່າເສຍຫາຍ ຕາມທີ່ກຳນົດໄວ້ ໃນຂໍ້ 1 ຫຼື 2 ຂອງມາດຕານີ້;

4. ໃນກໍລະນີ ຜູ້ໄດ້ຮັບຜົນກະທົບບໍ່ມີເອກະສານ ກ່ຽວກັບ ການນຳໃຊ້ທີ່ດິນຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1, 2 ແລະ 3 ຂອງມາດຕານີ້ ຈະບໍ່ໄດ້ຮັບການທົດແທນຄ່າເສຍຫາຍຕໍ່ການສູນເສຍທີ່ດິນດັ່ງກ່າວ, ແຕ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ຕໍ່ການສູນເສຍສິ່ງປຸກສ້າງ, ຕົ້ນໄມ້ ແລະ ຜົນລະປູກຈາກ ເຈົ້າຂອງໂຄງການ ຕາມມູນຄ່າປ່ຽນແທນທີ່ຄິດໄລ່ໄວ້;

5. ໃນກໍລະນີ ການສູນເສຍສິ່ງປຸກສ້າງ ທັງໝົດ ຫຼື ບາງສ່ວນ, ເຈົ້າຂອງໂຄງການ ຕ້ອງໄດ້ທົດແທນຄ່າເສຍຫາຍ ດ້ວຍ ມູນຄ່າປ່ຽນແທນ ຂອງສິ່ງປຸກສ້າງດັ່ງກ່າວ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ທີ່ເປັນເຈົ້າກຳມະສິດຂອງສິ່ງປຸກສ້າງນັ້ນ ໂດຍບໍ່ມີການຫັກຄ່າຫຼູ້ຍຫ້ຽນ ຫຼື ບໍ່ມີການຫຼຸດຄ່າທົດແທນ ສຳລັບວັດຖຸກໍ່ສ້າງທີ່ຍັງເຫຼືອ;

6. ໃນກໍລະນີ ທີ່ດິນ ຫຼື ສິ່ງປຸກສ້າງ ໄດ້ຢຸດການນຳໃຊ້ຊົ່ວຄາວ, ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບທີ່ເປັນເຈົ້າກຳມະສິດທີ່ດິນ ຫຼື ສິ່ງປຸກສ້າງນັ້ນ ຕາມແຕ່ລະກໍລະນີ ພ້ອມທັງຮັບປະກັນ ໃນການສົ່ງຄືນທີ່ດິນ ຫຼື ສິ່ງປຸກສ້າງ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບໃນສະພາບເດີມ;

7. ໃນກໍລະນີ ການສູນເສຍຕົ້ນໄມ້, ຜົນລະປູກ, ສັດລ້ຽງ ຫຼື ລາຍຮັບ ເຈົ້າຂອງໂຄງການ ຕ້ອງທົດແທນຄ່າເສຍຫາຍດ້ວຍມູນຄ່າປ່ຽນແທນ;

8. ໃນກໍລະນີ ການສູນເສຍໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ແກ່ຊຸມຊົນ, ເຈົ້າຂອງໂຄງການ ຕ້ອງໄດ້ປັບປຸງຄືນ ໃຫ້ຢູ່ໃນສະພາບຄ້າຍຄືເກົ່າ ແລະ ຕ້ອງເອົາໃຈໃສ່ເປັນພິເສດ ຖ້າເປັນການສູນເສຍໂຄງລ່າງພື້ນຖານທາງດ້ານວັດທະນະທຳ, ສາສະໜາ ແລະ ຮີດຄອງປະເພນີຂອງປະຊາຊົນທ້ອງຖິ່ນ;

9. ການປະຕິບັດການທົດແທນຄ່າເສຍຫາຍ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບໃນທຸກໆກໍລະນີ ເຈົ້າຂອງໂຄງການຕ້ອງໄດ້ປະສານສົມທົບກັບຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ປະຈຳທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ ຕາມແຜນການທົດແທນຄ່າເສຍຫາຍ;

10. ຜູ້ໄດ້ຮັບຜົນກະທົບຕ້ອງຮັບຮູ້ວ່າ ກິດຈະການໃດໆ ທີ່ດຳເນີນການພາຍຫຼັງວັນຂຶ້ນທະບຽນສິດຂອງຜູ້ໄດ້ຮັບຜົນກະທົບນັ້ນ ຈະບໍ່ໄດ້ຮັບການທົດແທນຄ່າເສຍຫາຍ ຈາກເຈົ້າຂອງໂຄງການ, ຍົກເວັ້ນໃນກໍລະນີ ແຜນການທົດແທນຄ່າເສຍຫາຍ ຫາກບໍ່ໄດ້ຮັບການຈັດຕັ້ງປະຕິບັດຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ໃນຂໍ້ 12 ຂອງມາດຕານີ້;

11. ເຈົ້າຂອງໂຄງການ ຕ້ອງປະຕິບັດ ແຜນການທົດແທນຄ່າເສຍຫາຍ ໃຫ້ສຳເລັດພາຍໃນຊາວສີ່ເດືອນ ນັບແຕ່ວັນເວລາແຜນການດັ່ງກ່າວ ໄດ້ຖືກຮັບຮອງເອົາຢ່າງເປັນທາງການ. ຖ້າເຈົ້າຂອງໂຄງການ ຫາກບໍ່ສຳເລັດການທົດແທນຄ່າເສຍຫາຍ ພາຍໃນໄລຍະເວລາທີ່ກຳນົດໄວ້ນັ້ນ, ເຈົ້າຂອງໂຄງການ ສາມາດສະເໜີຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ພິຈາລະນາຂະຫຍາຍໄລຍະເວລາ ເພີ່ມຕື່ມບໍ່ເກີນ ສິບສອງເດືອນ ເພື່ອປະຕິບັດການທົດແທນຄ່າເສຍຫາຍໃຫ້ສຳເລັດ. ຖ້າຍັງບໍ່ສຳເລັດ ຕ້ອງມີການປະເມີນຄືນມູນຄ່າທົດແທນຄ່າເສຍຫາຍທີ່ປະຕິບັດບໍ່ສຳເລັດນັ້ນ ແລ້ວນຳສະເໜີພິຈາລະນາຄືນໃໝ່;

12. ໃນກໍລະນີ ຜ່ານການປະເມີນຕີລາຄາ ຂອງຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນແຂວງ, ນະຄອນ ເຫັນວ່າ ແຜນການທົດແທນຄ່າເສຍຫາຍ ບໍ່ໄດ້ຮັບການຈັດຕັ້ງປະຕິບັດ ພາຍໃນສິບສອງເດືອນ ພາຍຫຼັງວັນຂຶ້ນທະບຽນສິດຂອງຜູ້ໄດ້ຮັບຜົນກະທົບແລ້ວ ຕ້ອງມີການປະເມີນຄືນໃໝ່ມູນຄ່າທົດແທນຄ່າເສຍຫາຍ ທີ່ບໍ່ໄດ້ຈັດຕັ້ງປະຕິບັດນັ້ນ ແລ້ວນຳສະເໜີພິຈາລະນາຄືນ.

**ມາດຕາ 9 ການຕີລາຄາ ແລະ ປະເມີນ ມູນຄ່າປ່ຽນແທນ**

ເຈົ້າຂອງໂຄງການ ໂດຍປະສານສົມທົບກັບ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນປະຈຳທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງດຳເນີນການຕີລາຄາ ແລະ ປະເມີນມູນຄ່າປ່ຽນແທນ ສຳລັບ ທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ, ສັດລ້ຽງ ແລະ ລາຍຮັບທີ່ຕ້ອງໄດ້ຮັບ ການທົດແທນຄ່າເສຍຫາຍ ພ້ອມທັງ ປຶກສາຫາລືເປັນເອກະພາບ ກັບຜູ້ໄດ້ຮັບຜົນກະທົບ ໂດຍກຳນົດເອົາທາງເລືອກທີ່ຖືກຕ້ອງ ແລະ ເໝາະສົມ ບົນພື້ນຖານການປະເມີນລາຄາຂອງລັດ, ລາຄາການຊື້-ຂາຍໃນທ້ອງຕະຫຼາດ ຫຼື ເປັນລາຄາສະເລ່ຍໃນໄລຍະເວລານັ້ນ ຂອງແຕ່ລະເຂດ, ແຕ່ລະປະເພດ ແລະ ແຕ່ລະທ້ອງຖິ່ນ.

ສຳລັບລາຄາຂອງລັດ (ລາຄາກາງ) ແມ່ນໄດ້ກຳນົດໄວ້ໃນລະບຽບການສະເພາະ ໂດຍມອບໝາຍໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຄົ້ນຄ້ວາກຳນົດ ຢ່າງຖືກຕ້ອງ ແລະ ເໝາະສົມໃນແຕ່ລະໄລຍະ.

## ໝວດທີ 3
## ການຈັດສັນຍົກຍ້າຍປະຊາຊົນ

**ມາດຕາ 10 ການສ້າງແຜນການຈັດສັນຍົກຍ້າຍປະຊາຊົນ**

ໄປຄຽງຄູ່ກັບການດໍາເນີນການສ້າງ ແຜນການທົດແທນຄ່າເສຍຫາຍ ຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 7 ຂອງດໍາລັດສະບັບນີ້, ເຈົ້າຂອງໂຄງການ ຕ້ອງປະສານສົມທົບກັບ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ປະຈໍາທ້ອງຖິ່ນທີ່ກ່ຽວຂ້ອງ ເກັບກໍາຂໍ້ມູນ ກ່ຽວກັບ ຈໍານວນປະຊາຊົນ ແລະ ບ້ານທີ່ຕ້ອງໄດ້ຍົກຍ້າຍ ລວມທັງ ເຂດຈັດສັນຍົກຍ້າຍ ແລະ ເຂດທໍາມາຫາກິນໃໝ່ ຢ່າງລະອຽດ ເພື່ອສ້າງເປັນ ແຜນການຈັດສັນຍົກຍ້າຍປະຊາຊົນ ປະກອບເຂົ້າໃນແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມສັງຄົມ ແລະ ທໍາມະຊາດ ຂອງໂຄງການພັດທະນາຕົນ.

**ມາດຕາ 11 ການປະຕິບັດແຜນການຈັດສັນຍົກຍ້າຍປະຊາຊົນ**

ເຈົ້າຂອງໂຄງການ ຕ້ອງປະຕິບັດການຈັດສັນຍົກຍ້າຍປະຊາຊົນ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບຫຼັກການສໍາຄັນ ດັ່ງນີ້:

1. ຈັດສັນຍົກຍ້າຍປະຊາຊົນ ໃຫ້ໄດ້ຕາມໄລຍະເວລາ ທີ່ໄດ້ກໍານົດໄວ້ໃນແຜນການຈັດສັນຍົກຍ້າຍທີ່ໄດ້ຖືກຮັບຮອງ ແລະ ຕ້ອງຫຼີກເວັ້ນການຈັດສັນຍົກຍ້າຍທີ່ມີລັກສະນະຊົ່ວຄາວ;

2. ຕ້ອງຫຼຸດຜ່ອນຜົນກະທົບທາງລົບ ຕໍ່ບ້ານເຈົ້າພາບ ພ້ອມທັງຮັບປະກັນໃຫ້ບ້ານເຈົ້າພາບສາມາດນໍາໃຊ້ຊັບພະຍາກອນ, ໂຄງລ່າງພື້ນຖານຂອງຊຸມຊົນ ທີ່ເຈົ້າຂອງໂຄງການສະໜອງ ແລະ ພັດທະນາໃຫ້ ຮ່ວມກັບຜູ້ໄດ້ຍົກຍ້າຍມາຢູ່ໃໝ່ ແລະ ຕ້ອງດໍາເນີນການທົດແທນຄ່າເສຍຫາຍ ຖ້າຫາກເກີດມີຜົນກະທົບຕໍ່ຊັບສິນ ພ້ອມທັງແກ້ໄຂຂໍ້ສະເໜີຕ່າງໆ ຂອງບ້ານເຈົ້າພາບ ໂດຍສົມທົບກັບຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ປະຈໍາທ້ອງຖິ່ນ ທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ເໝາະສົມ ເພື່ອຮັບປະກັນບໍ່ໃຫ້ມີຂໍ້ຂັດແຍ່ງ ທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທໍາ ລະຫວ່າງ ຜູ້ໄດ້ຮັບຜົນກະທົບກັບບ້ານເຈົ້າພາບ;

3. ເຄົາລົບ ວັດທະນະທໍາ, ສາສະໜາ, ຄວາມເຊື່ອຖື ແລະ ຮີດຄອງປະເພນີທ້ອງຖິ່ນຂອງຜູ້ໄດ້ຮັບຜົນກະທົບຕາມທີ່ໄດ້ປະຕິບັດຜ່ານມາ;

4. ໃນກໍລະນີ ເຂດຈັດສັນຍົກຍ້າຍປະຊາຊົນ ຈະມີການສ້າງຕັ້ງເປັນບ້ານໃໝ່ ໃຫ້ເຈົ້າຂອງໂຄງການ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ສ້າງແຜນຈັດສັນທີ່ດິນ ເພື່ອຮັບປະກັນການນໍາໃຊ້ທີ່ດິນ ຢ່າງຖືກຕ້ອງ, ເໝາະສົມທັງສອດຄ່ອງກັບແຜນພັດທະນາຂອງລັດຖະບານ ກໍຄືທ້ອງຖິ່ນ ຫຼື ໃນກໍລະນີ ເຂດຈັດສັນຍົກຍ້າຍປະຊາຊົນກວມເອົາເນື້ອທີ່ປ່າໄມ້, ໃຫ້ເຈົ້າຂອງໂຄງການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ສ້າງ ແລະ ປະຕິບັດແຜນການຟື້ນຟູບູລະນະປ່າໄມ້ ເພື່ອທົດແທນເນື້ອທີ່ປ່າໄມ້ທີ່ໄດ້ຮັບຜົນກະທົບ ພ້ອມທັງມີມາດຕະການຄຸ້ມຄອງປ່າໄມ້ທີ່ຍັງເຫຼືອຢູ່ ໂດຍບໍ່ໃຫ້ມີການບຸກລຸກປ່າໄມ້ ທີ່ຢູ່ໃນເຂດຈັດສັນຍົກຍ້າຍ, ເຂດໃກ້ຄຽງ ແລະ ເຂດປ່າໄມ້ອື່ນທີ່ຢູ່ນອກເຂດຈັດສັນຍົກຍ້າຍປະຊາຊົນ;

5. ໃນກໍລະນີ ຜູ້ໄດ້ຮັບຜົນກະທົບທີ່ຖືກຍົກຍ້າຍ ບໍ່ຕ້ອງການໄປອາໄສຢູ່ເຂດທີ່ຢູ່ອາໄສໃໝ່ ທີ່ເຈົ້າຂອງໂຄງການໄດ້ຈັດສັນໄວ້ໃຫ້, ຕ້ອງໄດ້ທົດແທນຄ່າເສຍຫາຍຢ່າງເຕັມສ່ວນ ດ້ວຍ ມູນຄ່າ ປ່ຽນແທນ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບ ໝວດທີ 2 ຂອງ ດຳລັດສະບັບນີ້ ບວກກັບເງິນອຸດ ໜູນເພີ່ມຕື່ມສຳລັບການຂົນສົ່ງໄປສູ່ຖິ່ນຖານໃໝ່ ທີ່ຜູ້ໄດ້ຮັບຜົນກະທົບນັ້ນ ເລືອກໄປເອງ;

6. ໃນກໍລະນີ ການຫຍັບຍ້າຍ ແມ່ນໃຫ້ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ເປັນຜູ້ພິຈາລະນາ ນຳໃຊ້ຫຼັກການຈັດສັນ ຍົກຍ້າຍ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ໃຫ້ຖືກຕ້ອງ ແລະ ເໝາະສົມ. ຖ້າເກີດມີຜົນ ກະທົບຕໍ່ຊັບສິນຂອງຜູ້ໄດ້ຮັບຜົນກະທົບທີ່ຫຍັບຍ້າຍ, ເຈົ້າຂອງໂຄງການ ຕ້ອງທົດແທນຄ່າເສຍ ຫາຍ ໃຫ້ຜູ້ໄດ້ຮັບຜົນກະທົບຕາມຫຼັກການທີ່ກຳນົດໄວ້ໃນດຳລັດສະບັບນີ້;

7. ໃນກໍລະນີ ຜ່ານການປະເມີນຕີລາຄາ ຂອງ ຄະນະຮັບຜິດຊອບການທົດແທນຄ່າ ເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ເຫັນວ່າ ການປະຕິບັດ ແຜນການຈັດສັນຍົກຍ້າຍ ບໍ່ມີຄວາມຄືບໜ້າ ພາຍໃນ ສິບສອງເດືອນ ພາຍຫຼັງວັນຂຶ້ນທະບຽນສິດ ຂອງຜູ້ໄດ້ຮັບຜົນກະທົບແລ້ວ ແຜນການດັ່ງກ່າວນັ້ນ ຈະຖືກຍົກເລີກ. ໃນກໍລະນີ ເຈົ້າຂອງໂຄງການ ຕ້ອງການສືບຕໍ່ປະຕິບັດແຜນການຈັດສັນຍົກຍ້າຍ, ຕ້ອງໄດ້ປັບປຸງ ແຜນການດັ່ງກ່າວນັ້ນໃຫ້ຖືກ ຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ແລ້ວນຳສະເໜີພາກສ່ວນກ່ຽວຂ້ອງ ພິຈາລະນາ ຮັບຮອງຄືນໃໝ່.

### ມາດຕາ 12 ການພັດທະນາເຂດຈັດສັນຍົກຍ້າຍປະຊາຊົນ

ເຈົ້າຂອງໂຄງການ ຕ້ອງພັດທະນາເຂດຈັດສັນຍົກຍ້າຍປະຊາຊົນ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ກັບຫຼັກການສຳຄັນ ດັ່ງນີ້:

1. ເຂດຈັດສັນຍົກຍ້າຍປະຊາຊົນ ຕ້ອງມີຄວາມໝັ້ນຄົງ ແລະ ມີຄວາມປອດໄພຈາກໄພພິ ບັດທາງທຳມະຊາດ ແລະ ຕ້ອງສ້າງໂຄງລ່າງພື້ນຖານ, ສິ່ງອຳນວຍຄວາມສະດວກ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບມາດຕະຖານທີ່ໄດ້ກຳນົດໄວ້;

2. ການກໍ່ສ້າງເຮືອນຫຼັງໃໝ່ໃຫ້ຜູ້ໄດ້ຮັບຜົນກະທົບ ຕ້ອງກໍ່ສ້າງໃນຮູບແບບເຮືອນ ແລະ ຂະ ໜາດທີ່ເໝາະສົມ ຢ່າງຕ່ຳສຸດ ໃຫ້ເທົ່າທຽມກັບຂະໜາດ ແລະ ຮູບແບບເຮືອນເດີມ ຂອງຜູ້ໄດ້ຮັບ ຜົນກະທົບ ແລະ ຕ້ອງພຽງພໍກັບຈຳນວນຄົນໃນແຕ່ລະຄົວເຮືອນ ບົນພື້ນຖານການເຫັນດີຂອງ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ;

3. ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ໃນການພັດທະນາ ເຂດຈັດສັນຍົກຍ້າຍປະຊາຊົນ ລວມທັງ ຄ່າໃຊ້ຈ່າຍໃນວຽກງານການສຳຫຼວດ, ການຈັດສັນ ແລະ ການພັດທະນາທີ່ດິນ, ການກໍ່ ສ້າງ ພ້ອມທັງ ການບຳລຸງຮັກສາເຂດຈັດສັນດັ່ງກ່າວ ໄປຕະຫຼອດໄລຍະການກໍ່ສ້າງໂຄງການ ຈົນເຖິງ ໄລຍະໃດໜຶ່ງທີ່ເໝາະສົມ ໃນໄລຍະດຳເນີນໂຄງການພັດທະນາ ຕາມການເຫັນດີຂອງ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ.

# ໝວດທີ 4
# ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ

**ມາດຕາ 13 ການສ້າງແຜນການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ**

ໄປຄຽງຄູ່ກັບການສ້າງແຜນການຈັດສັນຍົກຍ້າຍປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂອງດຳລັດສະບັບນີ້, ເຈົ້າຂອງໂຄງການ ຕ້ອງປະສານສົມທົບກັບ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນທີ່ປະຈຳຢູ່ທ້ອງຖິ່ນ ເກັບກຳຂໍ້ມູນ ກ່ຽວກັບອາຊີບທຳມາຫາກິນ ລວມທັງ ແຫຼ່ງລາຍຮັບຕ່າງໆຂອງຜູ້ໄດ້ຮັບຜົນກະທົບ ຢ່າງລະອຽດ ເພື່ອສ້າງເປັນ ແຜນການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ປະກອບເຂົ້າໃນແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຂອງໂຄງການພັດທະນາຕົນ.

**ມາດຕາ 14 ການປະເມີນລະດັບຊີວິດການເປັນຢູ່ຂອງປະຊາຊົນ**

ເຈົ້າຂອງໂຄງການ ຕ້ອງປະເມີນລະດັບຊີວິດການເປັນຢູ່ ຂອງ ຜູ້ໄດ້ຮັບຜົນກະທົບ ໃນໄລຍະກ່ອນ, ກຳລັງ ແລະ ຫຼັງ ການຈັດຕັ້ງປະຕິບັດ ແຜນການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ແລະ ນຳສະເໜີຜົນການປະເມີນ ຕໍ່ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ພິຈາລະນາ ແລະ ຮັບຮອງເອົາ ໃນແຕ່ລະໄລຍະ ເພື່ອກວດກາຄືນຜົນສຳເລັດ ໃນການຈັດຕັ້ງປະຕິບັດແຜນການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ.

**ມາດຕາ 15 ການປະຕິບັດແຜນການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ**

ເຈົ້າຂອງໂຄງການ ຕ້ອງຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບຫຼັກການສຳຄັນ ດັ່ງນີ້:

1. ສະໜອງທີ່ດິນກະສິກຳ ສຳລັບການຜະລິດຕາມຄວາມເໝາະສົມ ພ້ອມທັງ ສ້າງອາຊີບໃໝ່ ແລະ ອາຊີບເສີມທີ່ໝັ້ນຄົງ ພ້ອມທັງ ສິ່ງເສີມພູມປັນຍາຂອງຊາວບ້ານ ນອກຈາກອາຊີບທີ່ຕິດພັນກັບການຜະລິດກະສິກຳ ໃຫ້ ຜູ້ໄດ້ຮັບຜົນກະທົບ;

2. ລະດັບຊີວິດການເປັນຢູ່ຂອງ ຜູ້ໄດ້ຮັບຜົນກະທົບແຕ່ລະຄົວເຮືອນ ຕ້ອງໃຫ້ດີຂຶ້ນກວ່າເກົ່າ ຫຼື ເທົ່າເດີມ. ຖ້າເຈົ້າຂອງໂຄງການ ຫາກບໍ່ສາມາດຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ສຳເລັດໄດ້ພາຍໃນໄລຍະເວລາທີ່ກຳນົດໄວ້, ເຈົ້າຂອງໂຄງການ ສະເໜີຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ຂະຫຍາຍໄລຍະເວລາເພີ່ມຕື່ມ ເພື່ອຟື້ນຟູຊີວິດການເປັນຢູ່ໃຫ້ສຳເລັດ;

**3. ສຳລັບກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້, ຕ້ອງເອົາໃຈໃສ່ເປັນພິເສດ ເພື່ອຟື້ນຟູຊີວິດການເປັນຢູ່ຂອງ ຜູ້ໄດ້ຮັບຜົນກະທົບ ໃນກຸ່ມຄົນດັ່ງກ່າວ ເພື່ອໃຫ້ຫຼຸດພົ້ນຈາກຄວາມທຸກຍາກ ແລະ ໃຫ້ໄດ້ໃນສະພາບດີຂຶ້ນກວ່າເກົ່າ ຕາມທິດຊີ້ນຳຂອງຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ.**

**ມາດຕາ 16 ການຊ່ວຍເຫຼືອໃນໄລຍະຂ້າມຜ່ານ**

ເຈົ້າຂອງໂຄງການ ຕ້ອງສະໜອງການຊ່ວຍເຫຼືອເພີ່ມຕື່ມໃຫ້ ຜູ້ໄດ້ຮັບຜົນກະທົບທີ່ໄດ້ຍົກຍ້າຍຕະຫຼອດໄລຍະຂ້າມຜ່ານ ຢ່າງໜ້ອຍ 3 ປີ ຫຼື ຫຼາຍກວ່ານັ້ນ ຕາມການພິຈາລະນາຂອງຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ນັບແຕ່ເວລາທີ່ໄດ້ມີການຍົກຍ້າຍ ຜູ້ໄດ້ຮັບຜົນກະທົບດັ່ງກ່າວ ອອກຈາກເຂດທີ່ຢູ່ອາໄສເດີມ ດ້ວຍການຊ່ວຍເຫຼືອເພີ່ມຕື່ມ ດັ່ງນີ້:

1. ຕ້ອງສະໜອງສະບຽງອາຫານ, ເຄື່ອງອຸປະໂພກ ແລະ ບໍລິໂພກ ໃຫ້ຜູ້ໄດ້ຮັບຜົນກະທົບທີ່ຍົກຍ້າຍແຕ່ລະຄົນ ຕາມທີ່ມີຊື່ໃນສຳມະໂນຄົວ ໃນວັນຂຶ້ນທະບຽນສິດຂອງຜູ້ໄດ້ຮັບຜົນກະທົບດັ່ງກ່າວ ໄປຕະຫຼອດໄລຍະຂ້າມຜ່ານ;

2. ຄ່າທົດແທນການສູນເສຍລາຍຮັບໃນໄລຍະຍົກຍ້າຍ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ທີ່ມີໜ້າຕົວຈິງໃນວັນທີ່ດຳເນີນການຈັດສັນຍົກຍ້າຍ.

## ໝວດທີ 5
## ສິດ ແລະ ພັນທະ ຂອງເຈົ້າຂອງໂຄງການ ແລະ ຜູ້ໄດ້ຮັບຜົນກະທົບ

**ມາດຕາ 17 ສິດ ແລະ ພັນທະຂອງເຈົ້າຂອງໂຄງການ**

ໃນການທົດແທນຄ່າເສຍຫາຍ ແລະ ຈັດສັນຍົກຍ້າຍ ເຈົ້າຂອງໂຄງການ ມີສິດ ແລະ ພັນທະ ດັ່ງນີ້:

1. ສ້າງ ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ລວມທັງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ເປັນພາສາລາວ ສຳລັບໂຄງການພັດທະນາຂອງຕົນ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ກັບບົດແນະນຳທາງດ້ານວິຊາການທີ່ກ່ຽວຂ້ອງ ເພື່ອສະເໜີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາຮັບຮອງເອົາ ກ່ອນຈະດຳເນີນການກໍ່ສ້າງໂຄງການ ຫຼື ການເຊັນສັນຍາສຳປະທານໂຄງການ ໂດຍໃຫ້ສອດຄ່ອງກັບ ມາດຕາ 22 ຂອງ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;

2. ປະຕິບັດຢ່າງເຂັ້ມງວດ ພັນທະດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຂອງຕົນ ທີ່ກຳນົດໄວ້ໃນສັນຍາສຳປະທານໂຄງການ, ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ແລະ ຕ້ອງໃຫ້ຜູ້ໄດ້ຮັບຜົນກະທົບ ລວມທັງ ຜູ້ທີ່ກ່ຽວຂ້ອງອື່ນ ມີສ່ວນຮ່ວມ ໃນທຸກຂັ້ນຕອນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ລວມທັງ ການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

3. ສ້າງ ແຜນການທົດແທນຄ່າເສຍຫາຍ, ແຜນການຈັດສັນຍົກຍ້າຍ ແລະ ແຜນການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ເປັນພາສາລາວ ປະກອບເຂົ້າໃນແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການພັດທະນາຕົນ ໂດຍຮັບປະກັນໃຫ້ມີຄ່າໃຊ້ຈ່າຍຕ່າງໆຢ່າງພຽງພໍ ກຳນົດໄວ້ໃນແຜນການດັ່ງກ່າວ ເພື່ອໄດ້ລວມເຂົ້າໃນມູນຄ່າຂອງ

ໂຄງການ ແລະ ຖ້າຫາກວ່າງົບປະມານບໍ່ພຽງພໍໃນເວລາຈັດຕັ້ງປະຕິບັດຕົວຈິງ ເຈົ້າຂອງໂຄງການຕ້ອງສືບຕໍ່ຮັບຜິດຊອບ;

4. ຮັບຜິດຊອບໂດຍກົງ ແລະ ທັງຈັດຕັ້ງປະຕິບັດ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ;

5. ໄດ້ຮັບການຮ່ວມມື ກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃນການປະຕິບັດ ແຜນການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ ລວມທັງການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ;

6. ຕິດຕາມກວດກາດ້ວຍຕົນເອງ ໃນການປະຕິບັດແຜນການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ ລວມທັງ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ຄ່າໃຊ້ຈ່າຍ ສຳລັບການວ່າຈ້າງຄະນະຊ່ຽວຊານພາຍໃນ ຫຼື ຕ່າງປະເທດ ຫຼື ອົງການກວດກາທີ່ມີປະສົບຮຽນ ແລະ ປະສົບການເພື່ອຊ່ວຍ ທັງ ເຈົ້າຂອງໂຄງການເອງ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມາດຳເນີນການຕິດຕາມ ກວດກາ ແລະ ຕີລາຄາຜົນສຳເລັດ ໃນການປະຕິບັດແຜນການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ ລວມທັງ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ແລະ ກວດສອບການນຳໃຊ້ງົບປະມານກ່ຽວກັບ ວຽກງານດັ່ງກ່າວ;

8. ຮັບຜິດຊອບໃນການໃຊ້ຈ່າຍສຳລັບກິດຈະກຳ ທີ່ກ່ຽວຂ້ອງກັບຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາກ່ຽວກັບ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ ລວມທັງ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ;

9. ຮັບຜິດຊອບຕໍ່ຂໍ້ມູນທີ່ຕົນສ້າງຂຶ້ນ ພ້ອມທັງສະໜອງ ແລະ ເປີດເຜີຍຂໍ້ມູນ ທີ່ຕິດພັນກັບການຈັດຕັ້ງປະຕິບັດໂຄງການພັດທະນາ ລວມທັງ ການປະຕິບັດແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ແກ່ການຈັດຕັ້ງພາກລັດທີ່ກ່ຽວຂ້ອງ ແລະ ສາທາລະນະ;

10. ລາຍງານສະພາບການ ແລະ ເຫດການຕ່າງໆ ທີ່ພົວພັນກັບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍ ລວມທັງ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນໃຫ້ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ເປັນແຕ່ລະໄລຍະ;

11. ປະຕິບັດສິດ ແລະ ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 18 ສິດ ແລະ ພັນທະຂອງຜູ້ໄດ້ຮັບຜົນກະທົບ**

ໃນການທົດແທນຄ່າເສຍຫາຍ ແລະ ຈັດສັນຍົກຍ້າຍ ຜູ້ໄດ້ຮັບຜົນກະທົບມີສິດ ແລະ ພັນທະ ດັ່ງນີ້:

1. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບ ໂຄງການພັດທະນາ, ຜົນປະໂຫຍດ ແລະ ຜົນກະທົບທີ່ຕົນຈະໄດ້ຮັບ, ຄວາມຄືບໜ້າ ກ່ຽວກັບ ການປະຕິບັດແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕະຫຼອດໄລຍະເວລາການຈັດຕັ້ງປະຕິບັດໂຄງການພັດທະນາ;

2. ເຂົ້າຮ່ວມກອງປະຊຸມປຶກສາຫາລືໃນລະດັບຕ່າງໆ, ປະກອບຄຳເຫັນຕໍ່ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງຕົນ;

3. ໄດ້ຮັບການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ ຕາມແຜນການທົດແທນ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ;

4. ສະເໜີເປັນລາຍລັກອັກສອນ ຕໍ່ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນປະຈຳທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂ ບັນຫາທີ່ຕິດພັນກັບການທົດແທນ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງຕົນ ຈາກໂຄງການພັດທະນາ;

5. ເຂົ້າຮ່ວມ ຢ່າງເປັນເຈົ້າການ ໃນການຈັດຕັ້ງປະຕິບັດແຜນການທົດແທນ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ;

6. ສະໜອງຂໍ້ມູນໃຫ້ຊັດເຈນ, ຖືກຕ້ອງຕາມຄວາມເປັນຈິງ ພ້ອມທັງຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບ ຂໍ້ສະເໜີຂອງຕົນ;

7. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ແກ່ເຈົ້າຂອງໂຄງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດ ແຜນການທົດແທນ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ ລວມທັງ ການແກ້ໄຂຂໍ້ສະເໜີຂອງຕົນ;

8. ປະຕິບັດສິດ ແລະ ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

## ໝວດທີ 6
## ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ

**ມາດຕາ 19 ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ**

ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ປະກອບດ້ວຍ:

1. ຄະນະຮັບຜິດຊອບ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນແຂວງ, ນະຄອນ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍ ລັດຖະບານ ຕາມການສະເໜີຂອງ ລັດຖະມົນຕີ

ວ່າການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນໄລຍະເວລາ ເຈົ້າຂອງໂຄງການສຳເລັດການສ້າງ ຮ່າງ ບົດລາຍງານການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ລວມທັງ ແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ປະກອບມີ ເຈົ້າແຂວງ, ເຈົ້າຄອງນະຄອນ ທີ່ກ່ຽວຂ້ອງ ເປັນປະທານ; ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ ຜູ້ໃດໜຶ່ງເປັນຮອງປະທານ; ເຈົ້າເມືອງ, ຫົວໜ້າພະແນກການທີ່ກ່ຽວຂ້ອງ, ຕາງໜ້າເຈົ້າຂອງໂຄງການ ແລະ ຕາງໜ້າການຈັດຕັ້ງມະຫາຊົນ ເປັນກຳມະການ.

ໃນກໍລະນີເປັນໂຄງການພັດທະນາ ທີ່ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຢ່າງຫຼວງຫຼາຍ ຕາມການຄົ້ນຄ້ວາພິຈາລະນາຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຖືວ່າຄະນະກຳມະການນີ້ ບໍ່ຈຳເປັນຈະຕ້ອງໄດ້ຮັບການແຕ່ງຕັ້ງຂຶ້ນ ແລະ ໃນກໍລະນີ ໂຄງການພັດທະນາ ກວມເອົາຫຼາຍແຂວງ ແລະ ແຂວງ ມີຫຼາຍໂຄງການ ແມ່ນມອບໝາຍໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍສົມທົບກັບ ແຂວງທີ່ກ່ຽວຂ້ອງ ເປັນຜູ້ຄົ້ນຄ້ວາພິຈາລະນາຄວາມເໝາະສົມ ໃນການແຕ່ງຕັ້ງຄະນະກຳມະການດັ່ງກ່າວ;

2. ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ຕາມການສະເໜີຂອງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນ ປະກອບມີ ຜູ້ຕາງໜ້າ ຂະແໜງການ ແລະ ການຈັດຕັ້ງມະຫາຊົນ ແຂວງ, ນະຄອນ ທີ່ກ່ຽວຂ້ອງ.

ໃນກໍລະນີ ໂຄງການທີ່ບໍ່ໄດ້ມີການແຕ່ງຕັ້ງ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ແມ່ນໃຫ້ ເຈົ້າແຂວງ, ເຈົ້າຄອງນະຄອນ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

3. ໜ່ວຍປະຕິບັດງານການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍຄະນະຮັບຜິດຊອບ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ຕາມການ ສະເໜີຂອງ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ເທດສະບານ ປະກອບມີ ຜູ້ຕາງໜ້າຈາກຂະແໜງການ, ການຈັດຕັ້ງມະຫາຊົນ ເມືອງ, ເທດສະບານ ແລະ ນາຍບ້ານທີ່ກ່ຽວຂ້ອງ.

ໃນກໍລະນີໂຄງການທີ່ບໍ່ໄດ້ມີການແຕ່ງຕັ້ງ ຄະນະຮັບຜິດຊອບ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ແມ່ນ ໃຫ້ເຈົ້າແຂວງ, ນະຄອນ ເປັນຜູ້ແຕ່ງຕັ້ງ ໂດຍກົງ.

### ມາດຕາ 20 ສິດ ແລະ ໜ້າທີ່ ຂອງ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ

ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ, ຄຸ້ມຄອງການວາງແຜນ ແລະ ການຈັດຕັ້ງປະຕິບັດແຜນການທົດແທນ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຂອງເຈົ້າຂອງໂຄງການ ແລະ ໜ່ວຍງານທີ່ຢູ່ພາຍໃຕ້ການຊີ້ນຳຂອງຕົນ;

2. ແຕ່ງຕັ້ງ ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແລະ ໜ່ວຍປະຕິບັດງານການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ;

3. ພິຈາລະນາຮັບຮອງ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການພັດທະນາ ກ່ອນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຮອງ ເອົາຂັ້ນສຸດທ້າຍ;

4. ກຳນົດນະໂຍບາຍ ແລະ ຫົວໜ່ວຍ ການທົດແທນຄ່າເສຍຫາຍ, ກຳນົດໄລຍະເວລາການບຳລຸງຮັກສາເຂດຈັດສັນຍົກຍ້າຍ, ໄລຍະເວລາຂ້າມຜ່ານ ແລະ ໄລຍະການຟື້ນຟູຊີວິດການເປັນຢູ່ ຂອງແຕ່ລະໂຄງການພັດທະນາ;

5. ພິຈາລະນາ ແລະ ແກ້ໄຂ ຂໍ້ສະເໜີທີ່ກ່ຽວຂ້ອງກັບການທົດແທນ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ໃຫ້ທັນເວລາ;

6. ລາຍງານການຈັດຕັ້ງປະຕິບັດວຽກງານຂອງຄະນະຕົນ ໃຫ້ລັດຖະບານ ແລະ ສຳເນົານຳສົ່ງໃຫ້ ກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ເປັນແຕ່ລະໄລຍະ;

7. ອອກຂໍ້ຕົກລົງ ຫຼື ແຈ້ງການ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ;

8. ສະໜອງຂໍ້ມູນ ຂ່າວສານ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ແລະ ຜູ້ທີ່ມີສ່ວນຮ່ວມອື່ນ ກ່ຽວກັບໂຄງການພັດທະນາ, ຜົນປະໂຫຍດ ແລະ ຜົນກະທົບທີ່ຕົນຈະໄດ້ຮັບ, ຄວາມຄືບໜ້າ ກ່ຽວກັບການປະຕິບັດແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕະຫຼອດໄລຍະເວລາການຈັດຕັ້ງປະຕິບັດໂຄງການພັດທະນາ,

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະບານ.

### ມາດຕາ 21 ສິດ ແລະ ໜ້າທີ່ຂອງ ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ

ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການ ໃຫ້ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ໃນການປະສານງານກັບ ທຸກພາກສ່ວນການຈັດຕັ້ງຂອງລັດ ແລະ ເຈົ້າຂອງໂຄງການ ເພື່ອປະຕິບັດ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ;

2. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ເພື່ອໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ແກ່ເຈົ້າຂອງໂຄງການ ໃນການປະຕິບັດວຽກງານການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ;

3. ວາງແຜນການເຄື່ອນໄຫວ ແລະ ແຜນງົບປະມານ ສຳລັບການຈັດຕັ້ງປະຕິບັດວຽກງານທີ່ກ່ຽວຂ້ອງ ກັບ ການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ທີ່ດຳເນີນໂດຍ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍແຕ່ລະຂັ້ນ ດ້ວຍການປະສານສົມທົບກັບເຈົ້າຂອງໂຄງການ;

4. ທົບທວນ ແລະ ປະກອບຄຳເຫັນຕໍ່ເອກະສານຕ່າງໆ ທີ່ກ່ຽວຂ້ອງກັບ ການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ;

5. ປະສານງານຢ່າງໃກ້ຊິດ ກັບໜ່ວຍປະຕິບັດງານການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ໃນການເຂົ້າຮ່ວມກັບ ເຈົ້າຂອງໂຄງການ ຈັດຕັ້ງປະຕິບັດ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ;

6. ພິຈາລະນາ ແລະ ແກ້ໄຂຂໍ້ສະເໜີ ທີ່ກ່ຽວຂ້ອງກັບ ການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ ໃຫ້ທັນເວລາ;

7. ລາຍງານການຈັດຕັ້ງປະຕິບັດວຽກງານ ຂອງໜ່ວຍງານຕົນ ຕໍ່ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເປັນແຕ່ລະໄລຍະ;

8. ສະໜອງຂໍ້ມູນ ຂ່າວສານ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ແລະ ຜູ້ທີ່ມີສ່ວນຮ່ວມອື່ນ ກ່ຽວກັບໂຄງການພັດທະນາ, ຜົນປະໂຫຍດ ແລະ ຜົນກະທົບທີ່ຕົນຈະໄດ້ຮັບ, ຄວາມຄືບໜ້າ ກ່ຽວກັບການປະຕິບັດແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕະຫຼອດໄລຍະເວລາການຈັດຕັ້ງປະຕິບັດໂຄງການພັດທະນາ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ຮັບການມອບໝາຍຂອງ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ແລະ ຂັ້ນເທິງ.

## ມາດຕາ 22 ສິດ ແລະ ໜ້າທີ່ຂອງ ໜ່ວຍງານປະຕິບັດການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ

**ໜ່ວຍງານປະຕິບັດການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ມີສິດ ແລະ ໜ້າທີ່ ດັ່ງນີ້:**

1. ນຳພາ ແລະ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດ ບັນດາກິດຈະກຳທີ່ຕິດພັນກັບ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ພາຍໃນຂົງເຂດທ້ອງຖິ່ນຕົນ;

2. ສະໜັບສະໜູນ ແລະ ໃຫ້ການຮ່ວມມື ພ້ອມທັງ ປະສານງານ ແລະ ເຂົ້າຮ່ວມກັບໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແລະ ເຈົ້າຂອງໂຄງການ ໃນການປະຕິບັດ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ໃນຂົງເຂດທ້ອງຖິ່ນຕົນຮັບຜິດຊອບ ໃຫ້ທັນເວລາ;

3. ພິຈາລະນາ ແລະ ແກ້ໄຂຂໍ້ສະເໜີທີ່ກ່ຽວຂ້ອງກັບ ການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນໃຫ້ທັນເວລາ;

4. ລາຍງານການຈັດຕັ້ງປະຕິບັດວຽກງານຂອງໜ່ວຍງານຕົນ ຕໍ່ໜ່ວຍງານຄຸ້ມຄອງ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງເປັນແຕ່ລະໄລຍະ;

5. ສະໜອງຂໍ້ມູນ ຂ່າວສານ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ແລະ ຜູ້ທີ່ມີສ່ວນຮ່ວມອື່ນ ກ່ຽວກັບໂຄງການພັດທະນາ, ຜົນປະໂຫຍດ ແລະ ຜົນກະທົບທີ່ຕົນຈະໄດ້ຮັບ, ຄວາມຄືບໜ້າ ກ່ຽວກັບການປະຕິບັດ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕະຫຼອດໄລຍະເວລາການຈັດຕັ້ງປະຕິບັດໂຄງການພັດທະນາ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແລະ ຂັ້ນເທິງ.

## ໝວດທີ 7
## ການແກ້ໄຂຂໍ້ສະເໜີ ກ່ຽວກັບ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ

### ມາດຕາ 23 ການສະເໜີຂອງຜູ້ໄດ້ຮັບຜົນກະທົບ

ໃນກໍລະນີ ຜູ້ໄດ້ຮັບຜົນກະທົບເຫັນວ່າ ເຈົ້າຂອງໂຄງການ ບໍ່ປະຕິບັດຕາມ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕາມດຳລັດສະບັບນີ້ ຫຼື ແຜນການອື່ນທີ່ກ່ຽວຂ້ອງ ຊຶ່ງແຕະຕ້ອງເຖິງຜົນປະໂຫຍດຂອງຕົນ, ກໍມີສິດສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂ ໄປຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນ ມາດຕາ 24 ຂໍ້ 1 ຂອງດຳລັດສະບັບນີ້.

**ມາດຕາ 24 ຂັ້ນຕອນການແກ້ໄຂຂໍ້ສະເໜີຂອງຜູ້ໄດ້ຮັບຜົນກະທົບ ຫຼື ເຈົ້າຂອງໂຄງການ**

ການແກ້ໄຂຂໍ້ສະເໜີຂອງ ຜູ້ໄດ້ຮັບຜົນກະທົບ ຫຼື ເຈົ້າຂອງໂຄງການ ໃຫ້ປະຕິບັດຢ່າງເຂັ້ມງວດໄປຕາມຂັ້ນຕອນ ດັ່ງນີ້:

1. ກ່ອນອື່ນ ຜູ້ໄດ້ຮັບຜົນກະທົບ ຍື່ນຂໍ້ສະເໜີຕໍ່ໜ່ວຍປະຕິບັດງານ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແລະ ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ໄປຕາມລຳດັບ ເພື່ອໃຫ້ໜ່ວຍງານດັ່ງກ່າວ ປະສານສົມທົບກັບເຈົ້າຂອງໂຄງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄົ້ນຄ້ວາພິຈາລະນາແກ້ໄຂກ່ອນ;

ຖ້າຜູ້ໄດ້ຮັບຜົນກະທົບ ຍັງບໍ່ເຫັນດີນຳການແກ້ໄຂນັ້ນ ຫຼື ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຫາກເຫັນວ່າ ໜ່ວຍງານຕົນບໍ່ມີຄວາມສາມາດພິຈາລະນາແກ້ໄຂໄດ້ ຜູ້ໄດ້ຮັບຜົນກະທົບ ຫຼື ໜ່ວຍງານດັ່ງກ່າວ ກໍມີສິດ ຍື່ນຂໍ້ສະເໜີຕໍ່ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ ເພື່ອປະສານສົມທົບກັບ ເຈົ້າຂອງໂຄງການສືບຕໍ່ພິຈາລະນາແກ້ໄຂ ແລະ ຖືວ່າ ຄະນະນີ້ເປັນຜູ້ພິຈາລະນາແກ້ໄຂ ຂັ້ນສຸດທ້າຍ;

2. ໃນກໍລະນີບັນຫາເກີດຂຶ້ນ ຊຶ່ງບໍ່ໄດ້ກຳນົດໄວ້ໃນ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຖ້າຜູ້ໄດ້ຮັບຜົນກະທົບ ຫຼື ເຈົ້າຂອງໂຄງການ ບໍ່ເຫັນດີນຳການແກ້ໄຂ ຕາມຂັ້ນຕອນທີ່ກຳນົດໄວ້ໃນ ຂໍ້ 1 ຂອງມາດຕານີ້, ຝ່າຍທີ່ບໍ່ເຫັນດີ ກໍມີສິດສະເໜີຕໍ່ ລັດຖະບານ ໂດຍຜ່ານການຄົ້ນຄ້ວານຳສະເໜີ ຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາແກ້ໄຂຂັ້ນສຸດທ້າຍ;

3. ຖ້າຫາກຍັງບໍ່ເຫັນດີນຳການແກ້ໄຂຂອງລັດຖະບານ ຝ່າຍທີ່ບໍ່ເຫັນດີກໍມີສິດຮ້ອງຂໍຄວາມເປັນທຳ ຕໍ່ສະພາແຫ່ງຊາດ ຫຼື ຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາຕາມຂະບວນການຍຸຕິທຳ.

**ມາດຕາ 25 ພັນທະຂອງເຈົ້າຂອງໂຄງການ ໃນການແກ້ໄຂ ຂໍ້ສະເໜີຂອງຜູ້ໄດ້ຮັບຜົນກະທົບ**

ເຈົ້າຂອງໂຄງການ ມີພັນທະໃນການແກ້ໄຂ ຂໍ້ສະເໜີຂອງຜູ້ໄດ້ຮັບຜົນກະທົບດັ່ງນີ້:

1. ຮັບ ແລະ ຈົດບັນທຶກ ຂໍ້ສະເໜີທັງໝົດ ທັງປາກເປົ່າ ແລະ ເປັນລາຍລັກອັກສອນຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການ;

2. ເຂົ້າຮ່ວມ ໃນການແກ້ໄຂຂໍ້ສະເໜີ ໃນທຸກຂັ້ນຕອນ, ໃນທຸກລະດັບ ຕາມທີ່ກຳນົດໄວ້ໃນມາດຕາ 24 ຂອງດຳລັດສະບັບນີ້, ໃຫ້ການຮ່ວມມື, ສ້າງເງື່ອນໄຂສະດວກແກ່ການແກ້ໄຂຂໍ້ສະເໜີດ້ວຍເຈດຕະນາດີ, ໂປ່ງໃສ ແລະ ເປີດເຜີຍ;

3. ຮັບຜິດຊອບການໃຊ້ຈ່າຍທັງໝົດ ຂອງຜູ້ໄດ້ຮັບຜົນກະທົບ ແລະ ການຈັດຕັ້ງຂອງລັດທີ່ກ່ຽວຂ້ອງກັບການແກ້ໄຂຂໍ້ສະເໜີ ໃນທຸກຂັ້ນຕອນ, ທຸກລະດັບ.

## ໝວດທີ 8
## ການຕິດຕາມ ກວດກາ

### ມາດຕາ 26 ການຕິດຕາມ ກວດກາ

ການຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ປະກອບດ້ວຍ:

1. ການຕິດຕາມ ກວດກາ ໂດຍເຈົ້າຂອງໂຄງການ;

2. ການຕິດຕາມ ກວດກາ ໂດຍຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ;

3. ການຕິດຕາມ ກວດກາ ໂດຍກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

4. ການຕິດຕາມ ກວດກາ ໂດຍສະພາແຫ່ງຊາດ, ອົງການກວດສອບແຫ່ງລັດ, ອົງການກວດກາ ລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ.

### ມາດຕາ 27 ການຕິດຕາມ ກວດກາ ໂດຍເຈົ້າຂອງໂຄງການ

ເຈົ້າຂອງໂຄງການ ຕ້ອງສ້າງຕັ້ງ ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ເພື່ອຮັບຜິດຊອບ ເປັນເຈົ້າການໃນການຕິດຕາມ ກວດກາດ້ວຍຕົນເອງກ່ອນພາກສ່ວນອື່ນທັງໝົດ ໂດຍມີການສະຫຼຸບ ແລະ ລາຍງານສະພາບການຕິດຕາມ ກວດກາການຈັດຕັ້ງປະຕິບັດ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຂອງໂຄງການພັດທະນາຕາມທີ່ໄດ້ກຳນົດໄວ້ ໃນແຜນການທັງໝົດໃຫ້ແກ່ພາກສ່ວນຕິດຕາມ ກວດກາຂອງພາກລັດ ເປັນແຕ່ລະໄລຍະ.

### ມາດຕາ 28 ການຕິດຕາມ ກວດກາ ໂດຍຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ

ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຕ່ລະຂັ້ນມີໜ້າທີ່ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ດັ່ງນີ້:

1. ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນແຂວງ, ນະຄອນ ຊີ້ນຳລວມ ໜ່ວຍງານທີ່ຢູ່ໃຕ້ການຊີ້ນຳຂອງຕົນ ໃນການຕິດຕາມ ກວດກາການຈັດຕັ້ງປະຕິບັດ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ;

2. ໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນເປັນເຈົ້າການໃນການຕິດຕາມ ກວດກາ ເຈົ້າຂອງໂຄງການປະຕິບັດ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ດ້ວຍການລົງສະໜາມຕິດຕາມ ກວດກາ ພ້ອມທັງ ຄົ້ນຄວ້າປະກອບຄຳເຫັນຕໍ່ ບົດລາຍງານ ການຕິດຕາມ ກວດກາ

ຂອງເຈົ້າຂອງໂຄງການ ແລະ ສະຫຼຸບລາຍງານຕໍ່ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແຂວງ, ນະຄອນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງ ຄະນະກຳມະການຊີ້ນຳລວມໂຄງການ (ຖ້າມີການແຕ່ງຕັ້ງຂຶ້ນສະເພາະ ຈາກລັດຖະບານ) ເພື່ອຂໍທິດຊີ້ນຳ ເປັນແຕ່ລະໄລຍະ;

3. ໜ່ວຍປະຕິບັດງານການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຕ້ອງເຮັດໜ້າທີ່ເຄື່ອນໄຫວຕິດຕາມ ກວດກາໂດຍກົງ ກ່ຽວກັບ ການຈັດຕັ້ງ ປະຕິບັດ ແຜນການ ທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ໃນ ທ້ອງຖິ່ນຕົນຕາມຂອບເຂດທີ່ໜ່ວຍງານຕົນຮັບຜິດຊອບ ແລະ ລາຍງານຕໍ່ໜ່ວຍງານຄຸ້ມຄອງການ ທົດ ແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ເພື່ອຂໍທິດຊີ້ນຳ ເປັນແຕ່ລະໄລຍະ.

### ມາດຕາ 29 ການຕິດຕາມ ກວດກາ ໂດຍກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີໜ້າທີ່ຕິດຕາມ ກວດກາ ສະພາບ ການຈັດຕັ້ງປະຕິບັດ ແຜນການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ການຟື້ນຟູຊີວິດ ການເປັນຢູ່ຂອງປະຊາຊົນ ເປັນແຕ່ລະໄລຍະ ແລະ ລາຍງານຕໍ່ລັດຖະບານ ເພື່ອຂໍທິດຊີ້ນຳຢ່າງ ເປັນປະຈຳ. ນອກນີ້, ຍັງໄດ້ ຊ່ວຍສ້າງຄວາມເຂັ້ມແຂງທາງດ້ານວິຊາການ ໃຫ້ໜ່ວຍງານຄຸ້ມຄອງ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແລະ ໜ່ວຍປະຕິບັດງານ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ແນໃສ່ສ້າງຄວາມສາມາດໃຫ້ ແຕ່ລະໜ່ວຍງານ ເຄື່ອນໄຫວປະຕິບັດໜ້າທີ່ ໄດ້ຢ່າງມີປະສິດທິຜົນ.

### ມາດຕາ 30 ການຕິດຕາມ ກວດກາ ໂດຍສະພາແຫ່ງຊາດ, ອົງການກວດສອບແຫ່ງລັດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ

ສະພາແຫ່ງຊາດ, ອົງການກວດສອບແຫ່ງລັດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ ລາດບັງຫຼວງ ມີໜ້າທີ່ຕິດຕາມ ກວດກາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

### ມາດຕາ 31 ການຈັດຕັ້ງປະຕິບັດ

ມອບໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການປະສານ ສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງໂຄສະນາ ເຜີຍແຜ່, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ເຈົ້າຂອງໂຄງການ ແລະ ຜູ້ໄດ້ຮັບຜົນກະທົບ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 32 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ;

ດຳລັດສະບັບນີ້ ປ່ຽນແທນ ດຳລັດ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການພັດທະນາ ສະບັບເລກທີ 192/ນຍ, ລົງວັນທີ 7 ກໍລະກົດ 2005;

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບານ ແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

**ທອງສິງ ທຳມະວົງ**